ຜ— ຍິງຊາຍຈະຕ້ອງມີໂອກາດສເມີກັນ ມີສິດແລະມີສິດທິພິເສສເທົ່າທຽມກັນ.

ຖ— ວຽກການທີ່ປະຕິບັດລົງໄປ ດ້ວຍນ້ຳໃສໃຈຈິງນັ້ນ ຈະຕ້ອງໄດ້ເທີດທູນຂຶ້ນເປັນວຽກການທີ່ຄວນເຄົາຣົບບູຊາ

ຫຼ— ບັນດາເສຖກິດຂອງໂລກ ຈະຕ້ອງຖືກແກ້ໄຂດ້ວຍທັມມະແລະຈິດໃຈ

ພ— ຣະບົບການໃໝ່ສາກົນ ຈະດຳເນີນໄປບົນພື້ນຖານຂອງຄວາມສາມັກຄີ ແລະຄວາມເປັນອັນນຶ່ງອັນດຽວກັນ.

ພຣະບາຮາອຸລລະຫ໌ໄດ້ໃຊ້ຊີວິດຂອງພຣະອົງທີ່ຣະມານ ໔໐ ປີ ເພື່ອບຳເພັນໃກ້ລົ້ນຄວາມເຊື່ອຖືອຸທິດເພື່ອປະໂຍດ ແລະຄວາມສຸກຂອງມວນມະນຸສ. ພຣະອົງປະຣິນິພານໃນປີ ຄ.ສ. ໑໘໙໒. ພຣະອົງໄດ້ແຕ່ງຕັ້ງພຣະອັບດຸລບາຮາ ບຸດຊາຍຂອງພຣະອົງເປັນຜູ້ສືບຕໍ່ຫລັກພຣະທັມຄຳພີນາ ໃນຖານະເປັນຜູ້ເຜີຍແຜ່ຄຳສອນຂອງພຣະອົງ ແລະເປັນສັນຍະລັກຂອງສາສ-ນາ. ພຣະອັບດຸລບາຮາມີອາຍຸໄດ້ປະມານເຈັດສິບປີ ພຣະອົງໄດ້ເດີນທາງໄປເອີຣົບ, ແລະສະຫະຣັດອະເມຣິກາ ເພື່ອເຜີຍແຜ່ສາສນາໃຫ້ແກ່ປະຊາຊົນທຸກຊາດທຸກຊົນຊັ້ນ. ເມື່ອພຣະອົງປະຣິນິພານໃນປີ ຄ.ສ. ໑໙໒໑ ພຣະອົງໄດ້ແຕ່ງຕັ້ງໃຫ້ພຣະໂຊກີເອຟເຟນດີ ຊຶ່ງເປັນຫລານຊາຍຂອງພຣະອົງ ໃຫ້ເປັນຜູ້ພິທັກສາສນາແລະເປັນຜູ້ຕີຄວາມໝາຍ ຫລືເຜີຍແຜ່ພຣະຄຳພີຂອງສາ-



ສນາເປັນເວລາ ໓໖ ປີ ພາຍໃຕ້ການນຳພາຂອງພຣະໂຊກີເອຟເຟນດີ ສາສນາບາຮາອີໄດ້ຖືກສະຖາປານາຂຶ້ນເກືອບໃນທຸກສ່ວນຂອງໂລກ. ຕັ້ງແຕ່ປີ ໑໙໖໓ ເປັນຕົ້ນມາ ກິຈການຂອງສາສນາບາຮາອີທົ່ວໂລກແມ່ນຖືກດູແລຫລືປົກຄອງ ໂດຍທັມມະສະພາຍຸຕິທັມສາກົລ. ສະພາຍຸຕິທັມສາກົລນີ້ ປະກອບດ້ວຍທັມມະການ ໙ ທ່ານ ຊຶ່ງເລືອກຂຶ້ນມາຈາກຊາວບາຮາອີໃນທົ່ວໂລກໃນຮອບທຸກ ໕ ຫ້າປີ. ທີ່ຕັ້ງຂອງທັມມະສະພາຍຸຕິທັມສາກົລ ແມ່ນຕັ້ງຢູ່ທີ່ທັມມະສະພາສາສນາບາຮາອີແຫ່ງໂລກທີ່ເມືອງໄຮຟາ ປະເທດອິສຣາເອລ.

ຂໍເຊີນຊວນທ່ານໄດ້ເຂົ້າມາພິສູດເບິ່ງສາສນານີ້ ແລະມີສ່ວນໃນການສແວງໂຊກໃນດ້ານຈິດໃຈນີ້ດ້ວຍ.

**ศูนย์กลางศาสนาบาไฮ**

| | |
|---|---|
| **กรุงเทพฯ** | 77/1 ซอยหลังสวน 4 ถนนเพลินจิต<br>กรุงเทพ 10500 โทร. 252-5355 |
| **เชียงใหม่** | 72/24 ระมิงค์นิเวศน์ ถนนทิพยเนตร<br>อ.เมือง จ.เชียงใหม่ 50000 |
| **หาดใหญ่** | 5/13 ถนนนิพัทธ์สงเคราะห์ 1<br>หาดใหญ่ 90110<br>(หลังโรงแรมเพรสซิเด้นท์) |
| **ยโสธร** | 68 ถนนร่วมใจ ต.ในเมือง จ.ยโสธร 35000 |

ໂອ້! ພຣະຜູ້ເປັນເຈົ້າ ຈົ່ງກະຣຸນານຳທາງຜູ້ຂ້າແລະປົກປັກຮັກສາຜູ້ຂ້າ, ຈົ່ງສົ່ງແສງສວ່າງເຂົ້າໃສ່ຈິດໃຈຂອງຜູ້ຂ້າ ແລະໂປຣດທຳໃຫ້ຜູ້ຂ້າມີຄວາມຂາວສະອາດສົດໃສເໝືອນດາວຢູ່ເທິງຟ້າ. ພຣະອົງມີແສນຍານຸພາບອັນເກັ່ງກ້າ.

# ສາສນາ ບາຮາອີ

ໂອ ພຣະຜູ້ເປັນເຈົ້າ ຜູ້ຊົງມະຫາກະຣຸນາ ຈົ່ງຊົງຮ່ວມດົນໃຈຂອງພຣະອົງທົ່ວພິພົບ ໃຫ້ເປັນເອກະພາບ ຊົງຮວມສາສນາທັງຫລາຍທີ່ແຕກຕ່າງກັນຢູ່ ໃຫ້ເປັນອັນນຶ່ງອັນດຽວກັນ ຈົ່ງຊົງຮວມຊາດມະນຸດທັງຫລາຍໃຫ້ເປັນຊາດດຽວກັນ ເພື່ອພວກເຂົາທັງຫລາຍຈະເຫັນວ່າ ພວກເຂົາເປັນຄືຢູ່ໃນຄອບຄົວດຽວກັນ, ເປັນພົລເມືອງຂອງປະເທດດຽວກັນ, ຂໍໃຫ້ມວນມະນຸດທັງຫລາຍ ຈົ່ງຮ່ວມກັນຢູ່ດ້ວຍມິດຕະພາບ ແລະເອກກະພາບອັນດຽວກັນ.



*Baha'i House of Worship, India.*

**The Bahá'í Faith**
www.bahai.org * 1-800-22UNITE

**The Bahá'í House of Worship**
100 Linden Ave., Wilmette, IL 60091
how@usbnc.org * www.bahaitemple.org
(847) 853-2300

THE BAHA'I FAITH - Lao Language
Printed by SPIRITUAL ASSEMBLY OF THE BAHA'IS OF THAILAND
MAY 1987

ສາສນາບາຮາອີ ເປັນສາສນາສຳຫລັບຍຸກໃໝ່ ຊຶ່ງສະຖາປານາຂຶ້ນຕັ້ງແຕ່ ເມື່ອປະມານ ໑໓໘ ປີມາ ແລ້ວນີ້ໃນປະເທດອິຣ່ານ (ຕາວັນອອກກາງ) ຜູ້ສະຖາປານາສາສນານີ້ ມີພຣະນາມວ່າ ພຣະບາຮາອຸລລະຫ໌ ຊຶ່ງມີຄວາມໝາຍວ່າ "ແສງສວ່າງແຫ່ງພຣະຜູ້ເປັນເຈົ້າ" ຫລື "ຄວາມຣຸ່ງເຮືອງຂອງພຣະຜູ້ເປັນເຈົ້າ". ຜູ້ທີ່ເຊື່ອຖືເຫລື້ອມໃສໃນພຣະບາຮາອຸລລະຫ໌ນັ້ນ ເອີ້ນວ່າບາຮາອີ ຊຶ່ງໝາຍຄວາມວ່າ "ສາວົກຂອງແສງສວ່າງ!"

ໃນປີ ຄ.ສ. ໑໘໔໔ ພຣະຜູ້ສອນສາສນາຂອງພຣະອົງຊື່ວ່າ ພຣະບອບ ໃນເມືອງຊີຣາສໃນພາກໃຕ້ຂອງປະເທດອິຣ່ານປະກາດວ່າ ພຣະຜູ້ເປັນເຈົ້າໄດ້ສົ່ງພຣະອົງລົງມາ. ເພື່ອບອກຂ່າວດີເຣື່ອງການມາຂອງສາສະດາ ຫລືອາຈານຜູ້ຍິ່ງໃຫຍ່ຈາກພຣະຜູ້ເປັນເຈົ້າ, ອາຈານເທພະເຈົ້າອົງນີ້ຊື່ວ່າບາຮາອຸລລະຫ໌. ພຣະບາຮາອຸລລະຫ໌ສະເດັດລົງໂຜດ ໃນນາມຂອງເທພະອາຈານໃນຍຸກໃໝ່ນີ້ ເພື່ອຮວມມະນຸສຊາດອັນເປັນສະເໝືອນຄອບຄົວດຽວ ໃຫ້ມີສາສນາດຽວກັນນີ້ ໄດ້ມີຄຳສອນທີ່ບັງໄວ້ໃນສາສນາຕ່າງໆ ໃນອະດີດທັງຫລາຍວ່າ ເປັນສາສນາຂອງພຣະສຣີອາຣຫລືສາສນາຂອງພຣະເມດໄຕຍ໌,

ຄຳສອນອັນເປັນຫລັກ ຂອງສາສນາບາຮາອີມີສາມຢ່າງຄື:



໑— ມີພຣະຜູ້ເປັນເຈົ້າອົງດຽວ ເຖິງແມ່ນວ່າມະນຸດຈະເອີ້ນພຣະອົງ ດ້ວຍພຣະນາມຕ່າງໆ ກັນກໍຕາມ. ພຣະຜູ້ເປັນເຈົ້າຄືຍອດແຫ່ງຄວາມຈິງ, ເປັນຕົ້ນຕໍແຫ່ງຄວາມຮູ້ທັງຫລາຍ ເປັນພຣະຜູ້ສ້າງສັບພະສິ່ງທັງປວງ. ພຣະອົງມີຄວາມເປັນຢູ່ຊົ່ວນິຣັນດອນ. ພວກເຮົາບໍ່ສາມາດຈະຮູ້ພຣະອົງໄດ້ດ້ວຍສາຍຕາ ຫລືຄວາມຮູ້ຂອງເຮົາ ເພາະພຣະອົງບໍ່ມີຮູບຮ່າງ. ພຣະຜູ້ເປັນເຈົ້າໄດ້ຊົງເປີດເຜີຍຄຳສອນຂອງພຣະອົງ ເປັນຍຸກເປັນສມັຍ ໂດຍເລືອກເອົາບຸກຄົນໃດບຸກຄົນນຶ່ງຜູ້ຊຶ່ງຊາວບາຮາອີເອີ້ນວ່າ "ຜູ້ຕາງໜ້າຂອງພຣະຜູ້ເປັນເຈົ້າ" ຕົວຢ່າງເຊັ່ນ: ພຣະອັບຣະຮັມ, ພຣະໂມເຊສ, ພຣະກຣິສນາ, ພຣະພຸທະເຈົ້າ, ພຣະໄຊໂຣສເຕີຣ, ພຣະຄຣິສຕ໌, ພຣະໂມຮັມເມັດ, ພຣະບອບ ແລະພຣະບາຮາອຸລລະຫ໌.

໒ — ສາສນາທັງຫລາຍ ເປັນອັນດຽວກັນ ທຸກສາສນາມາຈາກພຣະຜູ້ເປັນເຈົ້າອົງດຽວ ແລະມີຈຸດປະສົງອັນດຽວກັນ. ທຸກສາສນາສອນໃຫ້ຄົນດີ ແລະໃຫ້ຮັກແພງກັນ ເຖິງແມ່ນວ່າຜູ້ສອນສາສນານັ້ນໆຈະລົງມາອຸບັດໃນຍຸກຕ່າງໆກັນ ແລະໃຊ້ພາສາຕ່າງໆກັນ.

໓— ໂລກນີ້ເປັນປະເທດດຽວ ແລະມະນຸສຊາດເປັນຄອບຄົວອັນດຽວກັນ. ພວກເຮົາທັງຫລາຍເປັນລູກຫລານຂອງພຣະຜູ້ເປັນເຈົ້າ ຜູ້ເປັນທີ່ຮັກພຣະອົງດຽວກັນ, ເຖິງວ່າພວກເຮົາຈະມີພື້ນຖານຕ່າງໆກັນ, ມີຜິວພັນຕ່າງໆກັນ, ມີຊາດຕ່າງກັນ, ມີວັທນະທັມສາສນາແລະປະເພນີຕ່າງກັນ.



ດຽວນີ້ສາສະນິກະຊົນຊາວບາຮາອີ ກະຈາຍກັນຢູ່ໃນ ໓໐໗ ປະເທດ ແລະດິນແດນໃນໂລກແລ້ວ. ພວກເຂົາເຫລົ່ານັ້ນ ແຕ່ກ່ອນເຄີຍເປັນສາສະນິກະຊົນຂອງຍິວ, ຮິນດູ, ພຸດ, ໄຊໂຣສຕຽນ, ຄຣິສຕຽນ, ມຸສລິມຫລືອື່ນໆ ອີກ ບາງຄົນກໍບໍ່ເຄີຍມີສາສນາເລີຍ. ເມື່ອມີຄວາມຈຳເປັນໃນການສະຖາປານາສາສນາ ເພື່ອປົກປັກຮັກສາຄວາມເປັນເອກະພາບ ຂອງມວນມະນຸສ ພຣະບາຮາອຸລລະຫ໌ສອນວ່າ:

໑— ທຸກຄົນ ຈະຕ້ອງສແວງຫາຄວາມຈິງ ແລະເຊື່ອຕາມຄຳສອນຂອງພຣະຜູ້ເປັນເຈົ້າຕາມຄວາມເຂົ້າໃຈຂອງຕົນເອງ ບໍ່ໃຫ້ເຊື່ອພຽງຢ່າງງົມງາຍຕາມຄວາມເຂົ້າໃຈຫລືຄວາມເຊື່ອຂອງຄົນອື່ນ.

໒. ພວກເຮົາທັງຫລາຍ ຄວນຈະພາກັນກວາດລ້າງຄວາມກຽດຊັງຊຶ່ງກັນແລະກັນ ອອກໃຫ້ໝົດ ເພາະມັນເຮັດໃຫ້ມະນຸສແຕກແຍກ ເຖິງແມ່ນວ່າມັນຈະເປັນສາສນາໃດ, ຊາດໃດ, ຊັ້ນໃດຫລືຊາດທີ່ແຍກຜິວພັນໃດກໍຕາມ.

໓— ເດັກນ້ອຍທຸກຄົນຈະຕ້ອງມີການສຶກສາພື້ນຖານຫາຄວາມຮູ້.

໔— ຊາວບາຮາອີ ຈະຕ້ອງເຊື່ອຟັງຣັຖບານຂອງປະເທດທີ່ຕົນອາສັຍຢູ່ ແລະບໍ່ຕ້ອງມີສ່ວນພົວພັນໃນດ້ານການເມືອງ ຈະເປັນກໍຣະນີໃດກໍຕາມ.

໕— ຊາດທັງຫລາຍ ຈະຕ້ອງຊອກຫາເອົາພາສາສາກົລ ເພື່ອໃຫ້ໃຊ້ຄູ່ກັນໄປກັບພາສາປະຈຳຊາດຂອງຕົນ.